ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
********

# ພາລະບົດບາດ
# ຂອງ
# ຄະນະກຳມະການຂົນຂວາຍແຫລ່ງທຶນ
## ຄະນະກຳມະການ ປະສານງານ ກອງທຶນໂລກ

ໂດຍ
ຄະນະກຳມະການ ປະສານງານ ກອງທຶນໂລກ
2014

# 1. ພາກທົ່ວໄປ

## 1.1 ເປົ້າໝາຍ ແລະ ຈຸດປະສົງ:

ໜ້າທີ່ຕົ້ນຕໍໜຶ່ງ ຂອງຄະນະກຳມະການປະສານງານກອງທຶນໂລກ ແມ່ນປະສານງານຂໍທຶນສຳລັບແຕ່ລະພະຍາດ ຂອງສາມພະຍາດ ໄປຍັງກອງທຶນໂລກ ເພື່ອຂໍອະນຸມັດ. ຄະນະກຳມະການປະສານງານກອງທຶນໂລກເລືອກເອົາ ຜູ້ຮັບທຶນຕົ້ນຕໍ (PRs) ເພື່ອຮັບປະກັນວ່າ ພວກເຂົາເຈົ້າຈະມີຄວາມສາມາດ ໃນການຈັດຕັ້ງປະຕິບັດແຜນງານ ໃຫ້ບັນລຸຕາມຄາດໝາຍ.

ອີງຕາມເງື່ອນໄຂທີ 1 ໃນຄູ່ມືຂອງກອງທຶນໂລກ ດ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ສຳລັບຄະນະກຳມະການ ປະສານງານກອງທຶນໂລກ, ຮຽກຮ້ອງໃຫ້ແຕ່ລະຄະນະກຳມະການປະສານງານກອງທຶນໂລກຕ້ອງປະຕິບັດດັ່ງນີ້:

i. ປະສານງານໃນການສ້າງເອກະສານຂໍທຶນດ້ວຍຄວາມໂປ່ງໃສ ແລະ ບັນທຶກຂັ້ນຕອນການສ້າງເອກະສານ ຊຶ່ງມີຫລາຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ ລວມທັງສະມາຊິກ ຂອງຄະນະກຳມະການ ປະສານງານກອງທຶນໂລກ ແລະ ຜູ້ທີ່ບໍ່ແມ່ນສະມາຊິກ ໃນການສັງລວມ ແລະ ທົບທວນ ບັນດາກິດຈະກຳ ທີ່ລະບຸຢູ່ໃນເອກະສານຄຳຮ້ອງ.

ii. ບັນທຶກຢ່າງຊັດເຈນຂະບວນການເຂົ້າຮ່ວມຂອງກຸ່ມປະຊາກອນເປົ້າໝາຍ ຊຶ່ງລວມທັງກຸ່ມປະຊາກອນ ທີ່ມີຄວາມສ່ຽງສູງ ໃນການສ້າງເອກະສານເພື່ອສະເໜີຂໍທຶນ.

ນອກຈາກນັ້ນ ໃນເງື່ອນໄຂທີ 2 ຂອງກອງທຶນໂລກ ຍັງໄດ້ຮຽກຮ້ອງມາຍັງແຕ່ລະຄະນະກຳມະການປະສານງານ ກອງທຶນໂລກດັ່ງນີ້:

iii. ສະເໜີໜຶ່ງ ຫລື ຫລາຍຜູ້ຮັບທຶນຕົ້ນຕໍ (PRs) ໃນເວລາຍື່ນເອກະສານຂໍທຶນ.

iv. ບັນທຶກຂະບວນການທີ່ໂປ່ງໃສ ໃນການສະເໜີແຕ່ງຕັ້ງບັນດາ ຜູ້ຮັບທຶນຕົ້ນຕໍໃໝ່ ແລະ ຜູ້ທີ່ຈະສືບຕໍ່ເປັນຜູ້ຮັບທຶນຕົ້ນຕໍ ບົນພື້ນຖານການກຳນົດມາດຕະຖານເງື່ອນໄຂ ແລະ ຈຸດປະສົງ ຢ່າງຈະແຈ້ງ.

v. ບັນທຶກຂັ້ນຕອນການຈັດການກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດທີ່ອາດຈະເກີດຂຶ້ນ ຊຶ່ງອາດມີກະທົບເຖິງຂະບວນການແຕ່ງຕັ້ງຜູ້ຮັບທຶນຕົ້ນຕໍ.

ເພື່ອປະສານງານໃນການຂໍທຶນໃນລັກສະນະເປີດກວ້າງ, ໂປ່ງໃສ ແລະ ກວມລວມ, ຄະນະກຳມະການປະສານງານກອງທຶນໂລກ ໄດ້ມອບໜ້າທີ່ ໃຫ້ຄະນະກຳມະການຂົນຂວາຍແຫລ່ງທຶນ (RMC) ເປັນຜູ້ປະຕິບັດພາລະບົດບາດແລະໜ້າທີ່ນີ້ ແທນຄະນະກຳມະການປະສານງານກອງທຶນໂລກ.

ຄະນະກຳມະການຂົນຂວາຍແຫລ່ງທຶນ (RMC) ແມ່ນຄະນະກຳມະການປະຈຳຂອງຄະນະກຳມະການປະສານງານກອງທຶນໂລກ ຊຶ່ງມີຈຸດປະສົງເພື່ອປະສານງານຂໍທຶນໄປຍັງບັນດາຜູ້ໃຫ້ທຶນຕ່າງໆ ແລະ ຂະບວນການຄັດເລືອກ ຜູ້ຮັບທຶນຕົ້ນຕໍ ໃນນາມຄະນະກຳມະການປະສານງານກອງທຶນໂລກ. ມີເປົ້າໝາຍ ເພື່ອຮັບປະກັນວ່າການຂໍທຶນນັ້ນຈະສາມາດຕອບສະໜອງຄວາມຕ້ອງການຂອງປະຊາຊົນທີ່ໄດ້ຮັບຜົນກະທົບ ແລະ ຜູ້ຕິດເຊື້ອຈາກສາມພະຍາດ, ໂດຍບໍ່ຊໍ້າຊ້ອນກັບແຫລ່ງທຶນອື່ນໆ, ສອດຄ່ອງກັບວົງຈອນງົບປະມານຂອງສປປ ລາວ ແລະ ຜູ້ຮັບທຶນຕົ້ນຕໍທີ່ຖືກຄັດເລືອກນັ້ນ ມີຄວາມສາມາດຈັດຕັ້ງປະຕິບັດໂຄງການທຶນຊ່ວຍເຫລືອໃນອະນາ ຄົດ.

ເພື່ອບັນລຸເປົ້າໝາຍດັ່ງກ່າວ, ຄະນະກຳມະການຂົນຂວາຍແຫລ່ງທຶນ ຕ້ອງສາມາດປະຕິບັດໄດ້ ບັນດາຈຸດປະສົງດັ່ງນີ້:

- ຮັບປະກັນການປະສານງານ ໃນການຂໍທຶນຂອງຄະນະກຳມະການປະສານງານກອງທຶນໂລກ ແລະ ປະຕິບັດໜ້າທີ່ຢ່າງກົມກຽວ.
- ສົ່ງເສີມ ແລະ ຈັດຕັ້ງການສົນທະນາພາຍໃນປະເທດ ແລະ ສັງລວມຜົນໄດ້ຮັບ ເຂົ້າໃນບົດສະເໜີຂໍທຶນຈາກກອງທຶນໂລກ.

- ຮັບປະກັນການພັດທະນາບົດສະເໜີຂໍທຶນ ຕາມແນວທາງ ຂອງຄະນະກໍາມະການປະສານງານກອງທຶນໂລກ ພາຍໃນກໍານົດເວລາທີ່ຄະນະກໍາມະການປະສານງານກອງທຶນໂລກ ໄດ້ກໍານົດໄວ້.
- ພັດທະນາຂີດຄວາມສາມາດ ເພື່ອໃຫ້ປະຊາກອນທີ່ຖືກກະທົບຈາກ ພະຍາດເອດ, ວັນນະໂລກ ແລະ ໄຂ້ຍຸງ ໄດ້ເຂົ້າຮ່ວມຫລາຍເທົ່າຫລາຍໄດ້ ໃນເວລາສ້າງບົດສະເໜີຂໍທຶນ.
- ອອກແບບ ແລະ ຕິດຕາມຂັ້ນຕອນຢ່າງເປີດກວ້າງ ແລະ ໂປ່ງໃສ ເພື່ອເລືອກເອົາຜູ້ຮັບທຶນຫລັກ ທີ່ເໝາະສົມທີ່ສຸດ ໃນການຈັດຕັ້ງປະຕິບັດໂຄງການທຶນຊ່ວຍເຫລືອໃນອະນາຄົດ.
- ຕິດຕາມການສະເໜີແລະຄໍາແນະນໍາຈາກ ຄະນະກໍາມະການກວດກາດ້ານເຕັກນິກ ແລະ ກອງເລຂາ ຂອງກອງທຶນໂລກ ຈົນກວ່າບົດສະເໜີໂຄງການຈະໄດ້ຮັບການອະນຸມັດ.
- ຊອກຫາແຫລ່ງທຶນອື່ນໆ ເພື່ອໃຫ້ພຽງພໍກັບຄວາມຕ້ອງການຂອງປະຊາກອນ ທີ່ຖືກກະທົບຈາກ ພະຍາດເອດ, ວັນນະໂລກ ແລະ ໄຂ້ຍຸງ ໃນ ສປປ ລາວ.
- ປະກອບສ່ວນຊ່ວຍກອງເລຂາ ຂອງຄະນະກໍາມະການປະສານງານກອງທຶນໂລກ ໃນການຜັນຂະ ຫຍາຍແຜນດໍາເນີນງານ ພ້ອມທັງງົບປະມານ ທີ່ແທດເໝາະແລະສາມາດປະຕິບັດໄດ້ ຊຶ່ງຈະຖືກ ອະນຸມັດ ໂດຍຄະນະກໍາມະການປະສານງານກອງທຶນໂລກ.
- ຊ່ວຍໃຫ້ກອງເລຂາເຄື່ອນໄຫວປະຕິບັດໜ້າທີ່ໃຫ້ດີທີ່ສຸດ.

## 1.2 ບົດບາດຂອງຄະນະກໍາມະການຂົນຂວາຍແຫຼ່ງທຶນ

ຄະນະກໍາມະການຂົນຂວາຍແຫຼ່ງທຶນ ມີບົດບາດໃນການປະສານງານໃນການຂໍທຶນ ໂດຍຮັບປະກັນ ໃຫ້ມີຂະບວນການສົນທະນາພາຍໃນປະເທດແບບເປີດກ້ວາງ, ໂປ່ງໃສ ແລະ ກວມລວມ.

ຄະນະກໍາມະການຂົນຂວາຍແຫຼ່ງທຶນ ບໍ່ແມ່ນໜ່ວຍງານທີ່ຕັດສິນບັນຫາ. ບົດບາດຂອງຄະນະກໍາມະການດັ່ງກ່າວ ແມ່ນສະໜອງຂໍ້ມູນ ແລະ ໃຫ້ຄໍາແນະນໍາ ຕໍ່ຄະນະກໍາມະການປະສານງານກອງທຶນໂລກ ເພື່ອພິຈາລະນາ ຢ່າງຮອບຄອບ ແລະ ຕັດສິນກ່ຽວກັບບັນຫາໃດໜຶ່ງ.

## 1.3 ໜ້າທີ່ຂອງ ຄະນະກໍາມະການຂົນຂວາຍແຫລ່ງທຶນ

ຄະນະກໍາມະການປະສານງານກອງທຶນໂລກ ໄດ້ມອບໜ້າທີ່ໃຫ້ຄະນະກໍາມະການຂົນຂວາຍແຫລ່ງທຶນ ຈັດຕັ້ງການປຶກສາຫາລື, ພັດທະນາບົດສະເໜີໂຄງການ ຕາມການຊີ້ນໍາຂອງຄະນະກໍາມະການປະສານ ງານກອງທຶນໂລກ, ຕິດຕາມເບິ່ງຄໍາເຫັນແລະຄໍາແນະນໍາຈາກ ກອງເລຂາ ແລະ ຄະນະກໍາມະການ ກວດກາດ້ານວິຊາການຂອງກອງທຶນໂລກ ທີ່ປະກອບໃສ່ບົດສະເໜີໂຄງການ, ພັດທະນາ ແລະ ຈັດຕັ້ງປະຕິບັດຂະບວນການຄັດເລືອກຜູ້ຮັບຕົ້ນຕໍ ຕາມຄູ່ມືແນະນໍາ ຂອງຄະນະກໍາມະການປະສານງານ ກອງທຶນໂລກ, ຊອກຫາແຫລ່ງທຶນອື່ນສໍາລັບຕ້ານກັບສາມພະຍາດ ແລະ ຜັນຂະຫຍາຍຈັດຕັ້ງປະຕິບັດ ຕາມແຜນການ ແລະ ງົບປະມານ ຂອງຄະນະກໍາມະການປະສານງານກອງທຶນໂລກ ແລະ ກອງເລຂາ ຄະນະກໍາມະການປະສານງານກອງທຶນໂລກ.

# 2. ໂຄງຮ່າງການຈັດຕັ້ງແລະໂຄງປະກອບ

## 2.1 ໂຄງຮ່າງການຈັດຕັ້ງ

ຄະນະກໍາມະການຂົນຂວາຍແຫລ່ງທຶນ ແມ່ນຄະນະກໍາມະການປະຈໍາ ຂອງຄະນະກໍາມະການປະສານ ງານກອງທຶນໂລກ ຢູ່ ສປປ ລາວ ແລະ ມີພາລະໜ້າທີ່ທີ່ສໍາຄັນໃນການໃຫ້ຄໍາປຶກສາ ແລະ ລາຍງານຄືນໂດຍກົງໃຫ້ຄະນະກໍາມະການປະສານງານກອງທຶນໂລກ.

ຄະນະກຳມະການຂົນຂວາຍແຫລ່ງທຶນເຮັດວຽກໂດຍມີການປະສານງານກັບຄະນະກຳມະການກວດກາ ພາຍໃຕ້ການຊີ້ນຳຈາກຄະນະກຳມະການປະສານງານກອງທຶນໂລກ ແລະ ຄະນະກຳມະການບໍລິຫານ ງານ, ຊຶ່ງປະທານຂອງຄະນະກຳມະການຂົນຂວາຍແຫລ່ງທຶນ ແມ່ນເປັນສະມາຊິກຂອງທັງ ຄະນະກຳມະ ການປະສານງານກອງທຶນໂລກ ແລະ ຄະນະກຳມະການບໍລິຫານງານ.

ຄະນະກຳມະການຂົນຂວາຍແຫລ່ງທຶນ ໄດ້ຮັບການສະໜັບສະໜູນດ້ານວິຊາການ ຈາກ 4 ໜ່ວຍງານ ວິຊາການ ແລະ ດ້ານບໍລິຫານຈາກກອງເລຂາຄະນະກຳມະການປະສານງານກອງທຶນໂລກ.




## 2.2 ໂຄງປະກອບ

### 2.2.1 ສະມາຊິກ

ຄະນະກຳມະການຂົນຂວາຍແຫລ່ງທຶນປະກອບມີສະມາຊິກ 9 ທ່ານ ຊຶ່ງຖືກເລືອກຕັ້ງ ຫຼື ຄັດເລືອກ ໂດຍຄະນະກຳມະການປະສານງານກອງທຶນໂລກ. ໃນນັ້ນ, ສະມາຊິກ 05 ທ່ານ ຂອງຄະນະກຳມະການຂົນຂວາຍແຫລ່ງທຶນແມ່ນຕົວແທນຈາກຄະນະກຳມະການປະສານງານກອງທຶນໂລກ (ຊຶ່ງອາດແມ່ນສະມາຊິກສົມບູນ ຫຼື ສະມາຊິກສຳຮອງ) ແລະ ອີກ 4 ທ່ານ ແມ່ນມາຈາກໜ່ວຍງານວິຊາການ.

ຄະນະກຳມະການຂົນຂວາຍແຫລ່ງທຶນຈະເລືອກຕັ້ງ ເອົາໜຶ່ງໃນສະມາຊິກຂອງຕົນ ເພື່ອດຳລົງຕຳແໜ່ງເປັນປະທານຄະນະກຳມະການ ແລະ ຜົນຂອງການເລືອກຕັ້ງດັ່ງກ່າວຈະຖືກຮັບຮອງເອົາໂດຍ ຄະນະກຳມະການປະສານງານກອງທຶນໂລກ .

ສະມາຊິກຂອງຄະນະກຳມະການຂົນຂວາຍແຫລ່ງທຶນ ປະກອບດ້ວຍຕົວແທນຂອງແຕ່ລະພາກສ່ວນດັ່ງນີ້:

- ຕົວແທນຂອງຜູ້ຕິດເຊື້ອຈາກສາມພະຍາດ ຫລື ກຸ່ມຄົນທີ່ມີຄວາມສ່ຽງໃນການຕິດພະຍາດເຫຼົ່ານີ້ (ຂໍ້ກໍານົດພາກບັງຄັບທີ່ໄດ້ລະບຸຢູ່ໃນເງື່ອນໄຂທີ 4)
- ຕົວແທນຈາກອົງການຮ່ວມມືສອງຝ່າຍ ແລະ ຫລາຍຝ່າຍ
- ຕົວແທນຈາກພາກລັດຖະບານ
- ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ພາກເອກກະຊົນ, ຫລື ທັງສອງພາກສ່ວນ

ສະມາຊິກຄະນະກໍາມະການປະສານງານກອງທຶນໂລກ ສາມາດສະເໜີເອົາຜູ້ສະໝັກ ຫລື ຜູ້ສະໝັກສາມາດສະເໜີຕົນເອງ. ການລົງຄະແນນສຽງຕ້ອງໄດ້ຈັດຂຶ້ນໃນລະຫວ່າງກອງປະຊຸມ ຂອງຄະນະກໍາມະການປະສານງານກອງທຶນໂລກ ໂດຍມີອົງປະກອບຄົບເງື່ອນໄຂຂອງການປະຊຸມ.

### 2.2.2 ອາຍຸການປະຈໍາການ

ສະມາຊິກຂອງຄະນະກໍາມະການຂົນຂວາຍແຫລ່ງທຶນ ມີອາຍຸການ 03 ປີ (ຍົກເວັ້ນ ສະມາຊິກ 6 ຄົນ ທີ່ໄດ້ເລີ່ມປະຕິບັດໜ້າທີ່ ນັບຕັ້ງແຕ່ຕອນຕົ້ນຂອງການຈັດຕັ້ງປະຕິບັດຕາມພາລະບົດບາດ ເພື່ອເຮັດໃຫ້ຂັ້ນຕອນການສັບປ່ຽນຂອງສະມາຊິກມີ ຄວາມຕໍ່ເນື່ອງ, ຕົວຢ່າງເຊັ່ນ: ສະມາຊິກ 3 ຄົນ ມີອາຍຸການ 1 ປີ, ສະມາຊິກ 3 ຄົນ ມີອາຍຸການ 2 ປີ). ຄະນະກໍາມະການປະສານງານກອງທຶນໂລກ ສາມາດປ່ຽນແທນ, ຕໍ່ອາຍຸການ ຫລື ເລືອກຕັ້ງຄືນໃໝ່ ສະມາຊິກຂອງຄະນະກໍາມະການການກວດກາ ຈໍານວນ 3 ຄົນ ໃນແຕ່ລະປີ. ຄະນະກໍາມະການປະສານງານກອງທຶນໂລກ ສາມາດເລືອກຕັ້ງຄືນໃໝ່ ຫຼື ຕໍ່ອາຍຸການ ທັງໝົດສະມາຊິກຄະນະກໍາມະການຂົນຂວາຍແຫລ່ງທຶນ.

ເງື່ອນໄຂການສິ້ນສຸດການເປັນສະມາຊິກຄະນະກໍາມະການຂົນຂວາຍແຫລ່ງທຶນ:
- ຄົບກໍານົດປີການ ຂອງການເຮັດວຽກ
- ມີຂໍ້ຂັດແຍ່ງດ້ານຜົນປະໂຫຍດທີ່ບໍ່ສາມາດແກ້ໄຂໄດ້
- ສະມາຊິກເອງຂໍລາຈາກໜ້າທີ່ ເຊິ່ງໄດ້ຮັບການເຫັນດີ ຈາກຄະນະກໍາມະການປະສານງານກອງທຶນໂລກ
- ຂາດຄວາມສາມາດໃນການເປັນຄະນະກໍາມະການຂົນຂວາຍແຫລ່ງທຶນ ໂດຍແມ່ນຄະນະກໍາມະການປະສານງານກອງທຶນໂລກເປັນຜູ້ຕັດສິນ
- ສໍາລັບສະມາຊິກຄະນະກໍາມະການກວດຂົນຂວາຍແຫລ່ງທຶນ ທີ່ມາຈາກສະມາຊິກກໍາມະການປະສານງານກອງທຶນໂລກ, ການສິ້ນສຸດການເປັນສະມາຊິກຂອງຄະນະກໍາມະການປະສານງານກອງທຶນໂລກ ຍ້ອນຂາດຄວາມສາມາດ ຕາມການຕັດສິນຂອງຄະນະກໍາມະການປະສານງານກອງທຶນໂລກ

### 2.2.3 ຄວາມຮູ້ຄວາມສາມາດ

ເພື່ອເຮັດໃຫ້ສໍາເລັດຕາມໜ້າທີ່ຮັບຜິດຊອບ ຂອງຄະນະກໍາມະການຂົນຂວາຍແຫລ່ງທຶນ, ສະມາຊິກຂອງຄະນະກໍາມະການຂົນຂວາຍແຫລ່ງທຶນ ຈະຕ້ອງໄດ້ເສຍສະລະເວລາຂອງຕົນ ເພື່ອປະກອບສ່ວນໃນບັນດາກິດຈະກໍາຂອງຄະນະ.

ໂດຍສະເພາະແລ້ວ, ບັນດາສະມາຊິກຈະຕ້ອງມີປະສົບການ ແລະ ທັກສະໃນບັນດາຂະແໜງການດັ່ງລຸ່ມນີ້:
- ການບໍລິຫານໂຄງການ ແລະ ການບໍລິການ, ການຕິດຕາມກວດກາ ແລະ ປະເມີນຜົນ ໃນຂົງເຂດ ເອສໄອວີ/ພະຍາດເອດ, ວັນນະໂລກ ແລະ ໄຂ້ຍຸງ.
- ຍຸດທະສາດໃນການປະເມີນຄວາມຕ້ອງການຂອງກຸ່ມເປົ້າໝາຍ ແລະ ມີປະສົບການໃນການໂຄສະນາຂົນຂວາຍກຸ່ມເປົ້າໝາຍ.
- ຄວາມຮູ້ດ້ານລະບາດຂອງສາມພະຍາດ ແລະ ການເຄື່ອນໄຫວຂອງສາມພະຍາດຢູ່ພາຍໃນປະເທດ

- ແຜນການດ້ານການເງິນ ແລະ ການບໍລິຫານ
- ການບໍລິຫານຄຸ້ມຄອງວຽກງານຈັດຊື້ ແລະ ສະໜອງອຸປະກອນ
- ການຕິດຕໍ່ສື່ສານແລະການໂຄສະນາຂົນຂວາຍ.

ເຖິງຢ່າງໃດກໍຕາມ, ການຂາດຄວາມສຳນານ ແລະ ປະສົບການໃນບັນດາຂະແໜງການເຫຼົ່ານີ້ ກໍຈະບໍ່ເປັນອຸປະສັກໃຫ້ແກ່ ສະມາຊິກຄະນະກຳມະການປະສານງານກອງທຶນໂລກ ໃນການເຂົ້າເປັນສະມາຊິກຂອງຄະນະກຳມະການຂົນຂວາຍແຫລ່ງທຶນ ເນື່ອງຈາກວ່າ ສະມາຊິກຄະນະກຳມະການຂົນຂວາຍແຫລ່ງທຶນ ສາມາດເຂົ້າເຖິງການສະໜອງຂໍ້ມູນທາງດ້ານວິຊາການ.

## 2.2.4 ຄວາມຮັບຜິດຊອບຂອງສະມາຊິກ

ສະມາຊິກ ຂອງຄະນະກຳມະການຂົນຂວາຍແຫລ່ງທຶນມີຄວາມຮັບຜິດຊອບດັ່ງນີ້:

### 2.2.4.1 ການພັດທະນາບົດສະເໜີໂຄງການ

- ປຶກສາ ແລະ ກຳນົດຍຸດທະສາດ ເພື່ອເສີມຂະຫຍາຍ " ການສົນທະນາພາຍໃນປະເທດ" ໃນການພັດທະນາບົດສະເໜີໂຄງການ.
- ຮັບປະກັນວ່າຜົນຈາກການປຶກສາຫາລືຢ່າງກວ້າງຂວາງພາຍໃຕ້ຮູບການ " ການສົນທະນາພາຍໃນປະເທດ" ໄດ້ຖືກສັງລວມ ເພື່ອປະກອບເຂົ້າໃນບົດສະເໜີໂຄງການ.
- ອອກແບບ ແລະ ຕິດຕາມຂະບວນການ ແລະ ກຳນົດເວລາ ເພື່ອນຳສະເໜີ ແລະ ອະນຸມັດ ບົດສະເໜີໂຄງການ.
- ປຶກສາຫາລືກັບໜ່ວຍງານວິຊາການຂອງແຕ່ລະພະຍາດເພື່ອພັດທະນາບົດສະເໜີໂຄງການ.
- ຮັບປະກັນໃຫ້ມີຄວາມເອກະພາບໃນການລະດົມທຶນ ແລະ ສອດຄ່ອງກັບຄວາມຕ້ອງການດ້ານງົບປະ ມານຂອງລັດ ຊຶ່ງໜ່ວຍງານວິຊາການໄດ້ສະເໜີ.
- ຮັບປະກັນເງື່ອນໄຂສຳລັບການມີສ່ວນຮ່ວມ ຢ່າງເປີດກວ້າງ ແລະ ມີຄວາມໝາຍສຳຄັນ ຂອງປະຊາຊົນທີ່ຖືກກະທົບ ໃນການສ້າງບົດສະເໜີໂຄງການ.
- ແຈ້ງການຢ່າງເປີດກ້ວາງ ເຖິງບັນດາຜູ້ມີສ່ວນຮ່ວມໃນທຸກລະດັບໃຫ້ສະເໜີບົດໂຄງການ ເພື່ອຊອກຫາບັນດາຄູ່ຮ່ວມງານໃນການຈັດຕັ້ງປະຕິບັດໂຄງການ.
- ກຳນົດຂັ້ນຕອນໃນການຄັດເລືອກຜູ້ຮັບທຶນຕົ້ນຕໍ ເພື່ອສະເໜີຂໍອະນຸມັດຈາກຄະນະກຳມະການ ປະ ສານງານກອງທຶນໂລກ.
- ຕິດຕາມແລະບັນທຶກຂະບວນການຄັດເລືອກຜູ້ຮັບທຶນຕົ້ນຕໍ.
- ຮັບ, ທົບທວນ ແລະ ປຶກສາຫາລືຢ່າງກ້ວາງຂວາງກັບຄະນະກຳມະການປະສານງານກອງທຶນໂລກ ຄົບຄະນະ ກ່ຽວກັບຮ່າງບົດສະເໜີໂຄງການຈາກໜ່ວຍງານວິຊາການ ກ່ອນຈະສະເໜີຂໍອະນຸມັດ ຈາກບັນດາສະມາຊິກຄະນະກຳມະການປະສານງານກອງທຶນໂລກ.
- ກວດກາຄວາມຖືກຕ້ອງ ຂອງເງື່ອນໄຂທັງໝົດ ກ່ອນຈະສົ່ງບົດສະເໜີໂຄງການ ແລະອີງໃສ່ເງື່ອນໄຂທີ່ວາງອອກໃນແຕ່ລະປີ. ສະເໜີຕໍ່ຄະນະກຳມະການປະສານງານກອງທຶນໂລກ ຄົບຄະນະ ກ່ຽວກັບສິ່ງທີ່ຈຳເປັນຈະຕ້ອງໄດ້ດັດປັບ ເພື່ອໃຫ້ບັນລຸໄດ້ທຸກເງື່ອນໄຂ.
- ຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງຄະນະກຳມະການກວດກາດ້ານເຕັກນິກ ແລະ ກອງເລຂາຂອງກອງທຶນໂລກ ເພື່ອໃຫ້ຄວາມກະຈ່າງແຈ້ງ ຫຼື ການດັດແກ້ບົດສະເໜີໂຄງການ.

#### 2.2.4.2 ໂຄສະນາຂົນຂວາຍ

- ເພີ່ມທະວີຄວາມຮັບຮູ້ ຂອງທຸກອົງການຈັດຕັ້ງຂອງລັດຖະບານ ແລະ ຜູ້ມີສ່ວນຮ່ວມອື່ນໆ ກ່ຽວກັບ ບັນດາກິດຈະກໍາຂອງກອງທຶນໂລກ ທີ່ຖືກຈັດຕັ້ງປະຕິບັດ ແລະ ໄດ້ຮັບຜົນສໍາເລັດ ໃນ ສປປ ລາວ.
- ໂຄສະນາຂົນຂວາຍເພື່ອໃຫ້ມີສ່ວນຮ່ວມຢ່າງເຕັມສ່ວນ ຂອງປະຊາຊົນທີ່ຖືກກະທົບຕົ້ນຕໍ ຢູ່ໃນບັນດາກິດຈະກໍາ ຂອງຄະນະກໍາມະການປະສານງານກອງທຶນໂລກ ກໍຄືບັນດາກິດຈະກໍາທີ່ກອງທຶນໂລກ ໃຫ້ທຶນ, ເພື່ອຮັບປະກັນໃຫ້ມີການຫລຸດຜ່ອນ ຫລື ກໍາຈັດການລັງກຽດ ແລະ ການຈໍາແນກຕໍ່ຜູ້ຕິດເຊື້ອ ແລະ ໄດ້ຮັບຜົນກະທົບ ຈາກສາມພະຍາດ ເປັນຕົ້ນແມ່ນ ແມ່ຍິງ, ຊາວໜຸ່ມ ແລະ ປະຊາຊົນ ບັນດາເຜົ່າ.
- ເກັບກໍາຄວາມຕ້ອງການຕົວຈິງ ຂອງປະຊາຊົນທີ່ຖືກກະທົບ ໂດຍໃຫ້ສອດຄ່ອງກັບບັນຫາທີ່ເປັນບຸລິມະສິດ ຂອງສາທາລະນະສຸກ.
- ຊີ້ໃຫ້ເຫັນຄວາມເປັນຈິງ ຜົນໄດ້ຮັບດ້ານສຸຂະພາບ ຈາກການແກ້ໄຂບັນຫາຂອງການຈໍາແນກ, ການລັງກຽດ ແລະ ຄວາສະເໜີພາບຍິງ-ຊາຍ.
- ປະສານສົມທົບວຽກງານໂຄສະນາຂົນຂວາຍອົງການຈັດຕັ້ງທາງສັງຄົມແລະອົງການຈັດຕັ້ງສາກົນ.

#### 2.2.4.3 ບັນດາກິດຈະກໍາການລະດົມທຶນ ຈາກແຫລ່ງທຶນອື່ນໆ

- ບົນພື້ນຖານກິດຈະກໍາໂຄສະນາຂົນຂວາຍ, ພັດທະນາ ຫຼື ເພີ່ມທະວີການພົວພັນກັບ ຜູ້ໃຫ້ທຶນ ທັງພາກລັດ ແລະ ພາກເອກະຊົນ, ກໍານົດການພັດທະນາການຄຸ້ມຄອງດ້ານການເງິນ ເພື່ອຂະຫຍາຍແຫລ່ງທຶນ ແລະ ງົບປະມານ ຂອງຄະນະກໍາມະການປະສານງານກອງທຶນໂລກ.
- ຂໍການສະໜັບສະໜູນການປະກອບສ່ວນ ຂອງລັດຖະບານ ທີ່ມີລັກສະນະຍືນຍົງ ແລະ ຂະຫຍາຍຕົວ ໃນການສົມທົບກັບທຶນ ຂອງກອງທຶນໂລກໃນການຕ້ານກັບສາມພະຍາດ.

#### 2.2.4.4 ສົມທົບກັບກອງເລຂາຄະນະກໍາມະການປະສານງານກອງທຶນໂລກ ເພື່ອຜັນຂະຫຍາຍແຜນງານ ແລະ ແຜນງົບປະມານ ຂອງຄະນະກໍາມະການປະສານງານກອງທຶນໂລກ.

- ບົນພື້ນຖານພາລະໜ້າທີ່ ແລະ ຄວາມຈໍາເປັນ ໃນການສ້າງຄວາມສາມາດຂອງສະມາຊິກ ຂອງຄະນະກໍາມະການປະສານງານກອງທຶນໂລກ ເພື່ອໃຫ້ໄດ້ຕາມມາດຕະຖານເງື່ອນໄຂທີ່ໄດ້ກໍານົດໄວ້, ຄະນະກໍາມະການຂົນຂວາຍແຫລ່ງທຶນ ຈະສະໜັບສະໜູນການຜັນຂະຫຍາຍຈັດຕັ້ງປະຕິບັດ ແຜນການ ແລະ ງົບປະມານຂອງຄະນະກໍາມະການປະສານງານກອງທຶນໂລກ ຢ່າງໂປ່ງໃສ ແລະ ໃຫ້ໄດ້ຮັບຜົນເປັນຢ່າງດີ.
- ຕ້ອງຮັບປະກັນວ່າ ບັນດາຕົວຊີ້ວັດທີ່ຕິດພັນກັບແຜນການ ແລະ ແຜນງົບປະມານ ຂອງຄະນະກໍາມະການປະສານງານກອງທຶນໂລກ ຕາມທີ່ໄດ້ຕົກລົງກັບກອງທຶນໂລກນັ້ນ ສາມາດບັນລຸຕາມຄາດໝາຍ.
- ຊອກຫາແຫລ່ງທຶນອື່ນ ຖ້າຈໍາເປັນ.

### 2.2.5 ຄວາມຮັບຜິດຊອບຂອງປະທານຄະນະກໍາມະການຂົນຂວາຍແຫລ່ງທຶນ

ບັນດາສະມາຊິກ ຂອງຄະນະກໍາມະການຂົນຂວາຍແຫລ່ງທຶນ ຈະເລືອກຕັ້ງເອົາ ປະທານຄະນະກໍາມະການຂົນຂວາຍແຫລ່ງທຶນ ໃນກອງປະຊຸມຊຸດທໍາອິດ ພາຍຫຼັງການເລືອກຕັ້ງ ຫຼື ແຕ່ງຕັ້ງສະມາຊິກຂອງຄະນະກໍາມະການ, ພາຍຫລັງທີ່ມີການຄັດເລືອກ ຫຼື ແຕ່ງຕັ້ງສະມາຊິກຂອງຄະນະກໍາມະການຄືນໃໝ່ ຫລື ເມື່ອໝົດວາລະການເຮັດວຽກຂອງປະທານ. ວາລະການເຮັດວຽກຂອງປະທານຄະນະກໍາມະການແມ່ນ 3 ປີ ໂດຍສາມາດຖືກເລືອກຕັ້ງຄືນໃໝ່ໄດ້ອີກໜຶ່ງສະໄໝ. ປະທານຄະນະກໍາມະການຂົນຂວາຍແຫລ່ງທຶນ ຄົນໃໝ່ ຈະຖືກຮັບຮອງເອົາຢ່າງເປັນທາງການ ໂດຍຄະນະກໍາມະການປະສານງານກອງທຶນໂລກ.

ປະທານຄະນະກໍາມະການ ຊອກຫາແຫລ່ງທຶນແມ່ນສະມາຊິກຂອງຄະນະກໍາມະການບໍລິຫານງານ. ໃນກໍ ລະນີບໍ່ສາມາດເຂົ້າຮ່ວມໄດ້ ປະທານຕ້ອງມອບໃຫ້ສະມາຊິກຜູ້ນຶ່ງ ຂອງຄະນະກໍາມະການຂົນຂວາຍ ແຫລ່ງທຶນ ເພື່ອ

ເປັນຕົວແທນໃນການເຂົ້າຮ່ວມປະຊຸມ ຂອງຄະນະກຳມະການບໍລິຫານງານ ເພື່ອເຮັດໃຫ້ການປະສານວຽກງານຂອງຄະນະກຳມະການໄດ້ດີ.

ນອກຈາກຄວາມຮູ້ຄວາມສາມາດທີ່ໄດ້ລະບຸໄວ້ຂ້າງເທິງນັ້ນ, ປະທານຄະນະກຳມະການຂົນຂວາຍແຫລ່ງ ທຶນຕ້ອງມີຄວາມຮູ້ຄວາມສາມາດໃນດ້ານຕ່າງໆເພີ້ມຕື່ມດັ່ງນີ້:

- ປະສານງານ ແລະ ອຳນວຍຄວາມສະດວກໃນການຈັດປະຊຸມ ແລະ ບັນດາກິດຈະກຳຕ່າງໆ;
- ຕິດຕໍ່ພົວພັນ ແລະ ປະສານສົມທົບກັບບັນດາຄູ່ຮ່ວມງານພາຍໃນປະເທດ;
- ສ້າງເຄືອຂ່າຍ ແລະ ສ້າງແຜນການ;
- ວິເຄາະ, ລາຍງານ ແລະ ນຳສະເໜີ;
- ເຂົ້າໃຈຂັ້ນຕອນ ແລະ ຄວາມຮຽກຮ້ອງຕ້ອງການ ຂອງກອງທຶນໂລກ.

### 2.3 ວິຊາການ ແລະ ຊ່ຽວຊານຈາກພາຍນອກ

ຄະນະກຳມະການຂົນຂວາຍແຫລ່ງທຶນ ອາດຈະຂໍຊ່ຽວຊານຈາກພາຍນອກ ເຂົ້າມາຊ່ວຍໃນກິດຈະກຳປົກກະຕິ ຫຼື ກິດຈະກຳສະເພາະໃດໜຶ່ງ. ກອງເລຂາຄະນະກຳມະການປະສານງານກອງທຶນໂລກ ຈະເປັນຜູ້ຈັດເກັບລະບົບຖານຂໍ້ມູນກ່ຽວກັບຜູ້ຊ່ຽວຊານຈາກພາຍນອກ ແລະ ຊ່ວຍຄະນະກຳມະການຂົນຂວາຍແຫລ່ງທຶນ ໃນການຄັດເລືອກເອົາຊ່ຽວຊານທີ່ມີຄຸນສົມບັດທີ່ເໝາະສົມ ເພື່ອປະກອບເຂົ້າໃນວຽກງານທີ່ຕ້ອງການ.

ຄະນະກຳມະການປະສານງານກອງທຶນໂລກ ຫລື ຄະນະກຳມະການຂົນຂວາຍແຫລ່ງທຶນ ຈະຕັດສິນໃຈວ່າເມື່ອໃດຄວນປຶກສາກັບຊ່ຽວຊານພາຍນອກ ຊຶ່ງຂຶ້ນກັບຄວາມສຳຄັນຂອງບັນຫາ ແລະ ການຄາດຄະເນຂອງໜ້າວຽກ. ຄະນະກຳມະການປະສານງານກອງທຶນໂລກ ຫລື ຄະນະກຳມະການກວດກາ ຕ້ອງພະຍາຍາມຊອກຫາຊ່ຽວຊານພາຍນອກ ຜູ້ທີ່ມີຄວາມສະໝັກໃຈໃນການໃຫ້ຄຳປຶກສາຕໍ່ຄະນະກຳມະການຂົນຂວາຍແຫລ່ງທຶນ. ກຳມະການປະສານງານກອງທຶນໂລກ ຈະຕ້ອງປະກາດຮັບຮອງເອົາການຈ້າງຊ່ຽວຊານພາຍນອກ ໃນກອງປະຊຸມຄົບຄະນະ ຫຼື ມອບໃຫ້ຄະນະກຳມະການບໍລິຫານງານເປັນຜູ້ຕັດສິນ.

## 3. ຂໍ້ຂັດແຍ່ງທາງດ້ານຜົນປະໂຫຽດ

ຂໍ້ຂັດແຍ່ງທາງດ້ານຜົນປະໂຫຽດພາຍໃນຄະນະກຳມະການຂົນຂວາຍແຫຼ່ງທຶນ ອາດສາມາດເກີດຂຶ້ນໄດ້ ເນື່ອງຈາກວ່າ ຄະນະກຳມະການປະສານງານກອງທຶນໂລກເອງ ກໍອາດປະກອບດ້ວຍສະມາຊິກ ທີ່ມາຈາກພາກສ່ວນຜູ້ຮັບທຶນຂອງໂຄງການກອງທຶນໂລກ.

ໃນນະໂຍບາຍເພື່ອຫຼຸດຜ່ອນຂັດແຍ່ງດ້ານຜົນປະໂຫຍດ ຂອງຄະນະກຳມະການປະສານງານກອງທຶນໂລກໄດ້ກຳນົດຂັ້ນຕອນຢ່າງຈະແຈ້ງໃນການລະບຸ, ປະກາດແຈ້ງການ, ບັນທຶກ ແລະ ແກ້ໄຂຂໍ້ຂັດແຍ່ງດ້ານຜົນປະໂຫຍດ. ສະມາຊິກຂອງຄະນະກຳມະການຂົນຂວາຍແຫຼ່ງທຶນ ຈະຕ້ອງເອົາໃຈໃສ່ປະຕິບັດຕາມນະໂຍບາຍກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດ ຂອງຄະນະກຳມະການປະສານງານກອງທຶນໂລກ ປະຈຳ ສປປ ລາວ ຢ່າງເຄັ່ງຄັດ.

## 4. ການສື່ສານ ແລະ ການຕັດສິນໃຈ

ຄະນະກຳມະການຂົນຂວາຍແຫລ່ງທຶນຈະຕ້ອງແຈ້ງໃຫ້ຄະນະກຳມະການບໍລິຫານງານຊາບຢ່າງເປັນປົກກະຕິ ກ່ຽວກັບ ຜົນຄົ້ນຄ້ວາ ແລະ ການສະເໜີຄຳເຫັນ ໂດຍຜ່ານປະທານຂອງຄະນະກຳມະການຂົນຂວາຍແຫລ່ງທຶນ ເຊິ່ງເປັນສະມາຊິກຂອງຄະນະກຳມະການບໍລິຫານງານ ເພື່ອຂໍຄຳເຫັນແລະຮັບຮອງຈາກຄະນະກຳມະການປະສານງານກອງທຶນໂລກ.

ມີສອງທາງທີ່ຈະຖືກຮັບຮອງເອົາໂດຍຄະນະກຳມະການປະສານງານກອງທຶນໂລກຄື: ໂດຍຜ່ານກອງປະຊຸມສາມັນຂອງຄະນະກຳມະການປະສານງານກອງທຶນໂລກ ຫຼື ກໍລະນີໃກ້ຈະໝົດກຳນົດເວລາ ແລະ ມີຂໍ້ຈຳກັດທາງດ້ານເວລາອື່ນໆ; ກອງເລຂາຄະນະກຳມະການປະສານງານກອງທຶນໂລກ ຈະສົ່ງຄຳເຫັນຜ່ານອີເມວເຖິງສະມາຊິກຂອງຄະນະກຳມະການປະສານງານກອງທຶນໂລກທັງໝົດ ເພື່ອໃຫ້ຮັບຮອງເອົາ ບົນພື້ນຖານບໍ່ມີຂໍ້ຂັດຄ້ານ.

ກອງເລຂາຂອງຄະນະກຳມະການປະສານງານກອງທຶນໂລກ ຈະເປັນຜູ້ຈັດຕັ້ງກອງປະຊຸມ ຄະນະກຳມະການຂົນຂວາຍແຫລ່ງທຶນ ແລະ ບັນທຶກທຸກໆກອງປະຊຸມຂອງຄະນະກຳມະການຂົນຂວາຍແຫລ່ງທຶນ. ບົດບັນທຶກກອງປະຊຸມ (ທັງເປັນພາສາອັງກິດ ແລະ ພາສາລາວ) ຕ້ອງໄດ້ແຈກຢາຍໃຫ້ສະມາຊິກ ຂອງຄະນະກຳມະການປະສານງານກອງທຶນໂລກທຸກຄົນ ແລະ ຕ້ອງມີໃນກອງປະຊຸມ ຂອງຄະນະກຳມະການປະສານງານກອງທຶນໂລກ.

ຄຳເຫັນຂອງຄະນະກຳມະການຂົນຂວາຍແຫລ່ງທຶນ ຈະຕ້ອງອີງໃສ່ພື້ນຖານຄວາມເປັນເອກະພາບ, ຖ້າຄະນະກຳມະການຂົນຂວາຍແຫລ່ງທຶນ ຫາກບໍ່ສາມາດເປັນເອກະພາບກັນໄດ້ ບັນຫາດັ່ງກ່າວຈະຕ້ອງມອບໃຫ້ຄະນະກຳມະການປະສານງານກອງທຶນໂລກ ເປັນຜູ້ພິຈາລະນາ.

## 5. ກອງປະຊຸມ

ຄະນະກຳມະການຂົນຂວາຍແຫລ່ງທຶນ ຈະຕ້ອງຈັດຕັ້ງກອງປະຊຸມຂຶ້ນ ເມື່ອມີຄວາມຈຳເປັນ ເພື່ອສືບຕໍ່ວຽກ. ຄະນະກຳມະການຂົນຂວາຍແຫລ່ງທຶນ ອາດຈະມີກອງປະຊຸມຕິດຕໍ່ກັນຫຼາຍຄັ້ງ ໃນໄລຍະທີ່ມີການກະກຽມບົດສະເໜີຂໍທຶນ.

## ໝາຍເຫດ:

ສະມາຊິກໝົດທຸກຄົນ ຂອງຄະນະກຳມະການກວດກາ ຈະໄດ້ຮັບບັດເຊີນກ່ອນຢ່າງໜ້ອຍໜຶ່ງອາທິດ ໂດຍທາງອີເມວ, ແຟກ ຫຼື ຈົດໝາຍ. ກອງເລຂາຄະນະກຳມະການປະສານງານກອງທຶນໂລກ ຈະຕ້ອງສົ່ງວາລະກອງປະຊຸມ ແລະ ເອກກະສານທີ່ກ່ຽວຂ້ອງກັບກອງປະຊຸມໃຫ້ໝົດທຸກຄົນ ພາຍໃນສາມວັນລັດຖະການ ກ່ອນກອງປະຊຸມ. ວາລະກອງປະຊຸມສາມາດດັດແກ້ ແລະ ຈະຕ້ອງຖືກຮັບຮອງເອົາໃນລະຫວ່າງການເປີດກອງປະຊຸມແຕ່ລະຄັ້ງ.